JICA J•ROL ໂຄງການ (ໄລຍະທີ II)

2023 - 2028

# ພາບລວມໂຄງການ

ນັບແຕ່ປີ **1998** ເປັນຕົ້ນມາ ແລະ ເປັນເວລາຫຼາຍກວ່າ **25** ປີ, ການຮ່ວມມືທາງດ້ານກົດໝາຍລະຫວ່າງ ສປປລາວ ແລະ ຍີ່ປຸ່ນ ໄດ້ມີການສົ່ງເສີມຄວາມກ້າວໜ້າທາງດ້ານທິດສະດີ ແລະ ການປະຕິບັດຕົວຈິງຂອງປະມວນກົດໝາຍແພ່ງ, ປະມວນກົດໝາຍອາຍາ ແລະ ກົດໝາຍພື້ນຖານອື່ນໆ ໃນ ສປປລາວ ພ້ອມກັບການພັດທະນາຊັບພະຍາກອນມະນຸດກໍຄືນັກກົດໝາຍ. ຄຽງຄູ່ກັບການປະກອບສ່ວນ ແລະ ການຮ່ວມມືທີ່ມີມາແຕ່ດົນນານ ໄດ້ເປັນຜົນໃຫ້ມີການພິມປຶ້ມຄູ່ມືທີ່ຫຼາກຫຼາຍ ເພື່ອໃຫ້ນັກກົດໝາຍ ແລະ ນັກສຶກສາກົດໝາຍໄດ້ນຳໃຊ້.

Legal Cooperation

**ການຊ່ວຍເຫຼືອດ້ານວິຊາການກົດໝາຍ**

▷▷▷ **ຕັ້ງແຕ່ປີ 1998**






ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ (ໄລຍະທີ II)

## ຈຸດປະສົງຂອງໂຄງການ

ໂຄງການກົດໝາຍໄຈກາ ໄລຍະໃໝ່ ກໍຄື (ໄລຍະທີ II), ພວກເຮົາມີເປົ້າໝາຍທີ່ຈະປັບປຸງລະບຽບລັດທີ່ປົກຄອງດ້ວຍກົດໝາຍຢູ່ ສປປ ລາວ ໃນການພັດທະນາ ການຈັດຕັ້ງປະຕິບັດຂອງນັກກົດໝາຍ ແລະ ປັບປຸງທັກສະຂອງນັກສຶກສາ ລວມທັງອາຈານສອນໃນຂົງເຂດກົດໝາຍໃຫ້ດີຂຶ້ນຕື່ມ, ໂດຍຜ່ານການສົນທະນາປຶກສາຫາລືລະຫວ່າງນັກກົດໝາຍຈາກ ສປປ ລາວ ແລະ ຍີ່ປຸ່ນ. ບັນດານັກກົດໝາຍ ຈະໄດ້ຮັບທັກສະທາງດ້ານກົດໝາຍທີ່ສຳຄັນ ແລະ ປະສົບການຫຼາກຫຼາຍພ້ອມທັງຮູ້ໄດ້ເຖິງວິທີຝຶກອົບຮົມທີ່ຈຳເປັນສຳລັບການພັດທະນາທາງດ້ານກົດໝາຍ. ໂຄງການພວກເຮົາມີຄວາມພະຍາຍາມທີ່ຈະຮັກສາການພົວພັນຮ່ວມມືກັນຢ່າງເລິກເຊິ່ງ ລະຫວ່າງ ລັດຖະບານ ແລະ ປະຊາຊົນລາວ-ຍີ່ປຸ່ນ ເພື່ອໃຫ້ການພົວພັນຂອງທັງສອງຊາດ ໄດ້ສືບຕໍ່ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາລັດທີ່ປົກຄອງດ້ວຍກົດໝາຍ ຢູ່ ສປປ ລາວ.

## ຄູ່ຮ່ວມພັດທະນາຈາກ 4 ພາກສ່ວນ

ອົງການໄອຍະການປະຊາຊົນສູງສຸດ

ສານປະຊາຊົນສູງສຸດ

**ກຸ່ມຄົ້ນຄວ້າ**

ກະຊວງຍຸຕິທຳ

ຄະນະນິຕິສາດ ແລະ ລັດຖະສາດ (ຄນລ), ມຊ

ເຮັດວຽກຮ່ວມກັບຊ່ຽວຊານໄຈກາ

## ຍຸດທະສາດຂອງໂຄງການ

**2023 - 2028**

**ພື້ນຖານການພັດທະນານັກວິຊາຊີບກົດໝາຍ**

**ສຸມໃສ່...**
ການພັດທະນາ
ຊັບພະຍາກອນມະນຸດ

**ພັດທະນາ...**
ທິດສະດີພື້ນຖານ
- ປະມວນກົດໝາຍແພ່ງ
- ປະມວນກົດໝາຍອາຍາ

**ຍົກລະດັບ...**
ເຄື່ອງມືໃນການຝຶກອົບຮົມ

**ໃຫ້ຄວາມສຳຄັນ...**
ການພິມປຶ້ມ
ຕົວຢ່າງຄຳຕັດສິນ

## ກິດຈະກຳຂອງໂຄງການ 2023 - 2028

### ກຸ່ມ CCR

**ກຸ່ມ ຄົ້ນຄ້ວາປະມວນກົດໝາຍແພ່ງ**

- ຮຽນຮູ້ເທັກນິກທາງກົດໝາຍທີ່ສຳຄັນໃນການນຳໃຊ້ປະມວນກົດໝາຍແພ່ງ.
- ພັດທະນາເອກະສານອ້າງອີງທີ່ສະແດງໃຫ້ເຫັນຂະບວນການທີ່ເໝາະສົມສຳລັບການນຳໃຊ້ກົດໝາຍໂດຍອີງໃສ່ກໍລະນີສຶກສາ.

### ກຸ່ມ PNC

**ກຸ່ມ ຄົ້ນຄ້ວາປະມວນກົດໝາຍອາຍາ**

- ຄົ້ນຄວ້າບັນດາມາດຕາໃນພາກສະເພາະຂອງປະມວນກົດໝາຍອາຍາ ທີ່ຈະກຳນົດແຕ່ລະການກະທຳຜິດ.
- ລວບລວມບັນດາກໍລະນີສຶກສາ ໂດຍອີງໃສ່ຕົວຢ່າງການປະຕິບັດຕົວຈິງ.

### ກຸ່ມ EDU

**ກຸ່ມ ພັດທະນາການສຶກສາ ແລະ ຝຶກອົບຮົມກົດໝາຍແພ່ງ**

- ພັດທະນາປື້ມຄູ່ມືການສິດສອນທີ່ເຄີຍເປັນຜົນງານຜ່ານມາ ເພື່ອໃຫ້ນັກສຶກສາ ແລະ ນັກກົດໝາຍໜຸ່ມນ້ອຍສາມາດເຂົ້າໃຈໄດ້ເຖິງປະເດັນຂັດແຍ່ງໃນຄະດີແພ່ງ.
- ສະມາຊິກກຸ່ມຄົ້ນຄວ້າສາມາດເຂົ້າໃຈໄດ້ຢ່າງທ່ອງແທ້ເຖິງການປະຕິບັດກົດໝາຍໂດຍຜ່ານຂັ້ນຕອນສ້າງເຄື່ອງມືຕ່າງໆທີ່ໃຊ້ໃນການສິດສອນ.

## ທີ່ຕັ້ງຫ້ອງການຂອງໂຄງການ

ບ້ານສີເມືອງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ | ໂທ: 021-254-307 or ແຟັກ: 021-254-308




Google Map

# ໝາກຜົນຂອງໂຄງການກົດໝາຍໄຈກາ
# 2018 - 2023




**01** — ກຸ່ມໂຄສະນາ ແລະ ເຜີຍແຜ່ ປະມວນກົດໝາຍແພ່ງ

ບົດອະທິບາຍປະມວນ ກົດໝາຍແພ່ງ

**02** — ກຸ່ມຄົ້ນຄວ້າທິດສະດີແພ່ງ

ປື້ມຄູ່ມື ການຂຽນຄຳຕັດ ສິນຄະດີແພ່ງຂອງສານ

**03** — ກຸ່ມການສຶກສາ (ອາຍາ)

ປື້ມຄູ່ມືການກຳນົດຂໍ້ເທັດຈິງ ໃນການດຳເນີນຄະດີອາຍາ

**04** — ກຸ່ມການສຶກສາ (ແພ່ງ)

ປື້ມຄູ່ມືການກຳນົດຂໍ້ເທັດຈິງ ໃນການດຳເນີນຄະດີແພ່ງ

**05** — ກຸ່ມປະມວນອາຍາ

ທິດສະດີກົດໝາຍອາຍາ (ພາກທົ່ວໄປ)

## ການເຜີຍແຜ່ຖານຂໍ້ມູນ ແລະ ເອກະສານທີ່ສ້າງໂດຍໂຄງການ J-ROL

ຂໍ້ມູນເພີ່ມຕື່ມກ່ຽວກັບກິດຈະກຳຂອງໂຄງການ
ທ່ານສາມາດ ຕິດຕາມໂດຍການສະແກນ **QR code** ດ້ານລຸ່ມ !!

**1**




**2**

ເອກະສານ ແລະ ປື້ມຄູ່ມືກົດໝາຍຂອງໂຄງການ

ຕິດຕາມເຮົາໄດ້: https://www.facebook.com/jica.legal.laos